ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

3383

ກະຊວງການເງິນ

ເລກທີ______/ກງ.

ນະຄອນຫລວງວຽງຈັນ, ວັນທີ....21 NOV 2012....

# ແຈ້ງການ

ເຖິງ : ບັນດາກະຊວງ, ອົງການທຽບເທົ່າ, ອົງການຈັດຕັ້ງສາກົນ, ລັດວິສາຫະກິດ, ວິສາຫະກິດບຸກຄົນ, ນິຕິບຸກຄົນ,ພະນັກງານລັດຖະກອນ, ທະຫານ, ຕຳຫລວດ ແລະ ປະຊາຊົນທຸກຊັ້ນຄົນຢູ່ໃນຂອບເຂດທົ່ວປະເທດ.

ເລື່ອງ : ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍສ່ວຍສາອາກອນ ສະບັບເລກທີ 05/ສພຊ, ລົງວັນທີ 20 ທັນວາ 2011 (ສະບັບປັບປຸງ) .

- ອີງຕາມ ກົດໝາຍວ່າດ້ວຍສ່ວຍສາອາກອນ ສະບັບປັບປຸງເລກທີ 05/ສພຊ, ລົງວັນທີ 20 ທັນວາ 2011;
- ອີງຕາມ ລັດຖະດຳລັດຂອງປະທານປະເທດ ສະບັບເລກທີ 058/ປປທ, ລົງວັນທີ 16 ມັງກອນ 2012, ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍສ່ວຍສາອາກອນສະບັບປັບປຸງ.
- ອີງຕາມ ມະຕິຕົກລົງຂອງສະພາແຫ່ງຊາດ ສະບັບເລກທີ 21/ສພຊ, ລົງວັນທີ 20 ທັນວາ 2011, ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍວ່າດ້ວຍສ່ວຍສາອາກອນສະບັບປັບປຸງ.

ກະຊວງການເງິນ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານຊາບ ດັ່ງນີ້:

1. ປະຕິບັດຕາມມາດຕາ 99 ຂອງກົດໝາຍວ່າດ້ວຍສ່ວຍສາອາກອນ ສະບັບປັບປຸງ ເລກທີ 05/ສພຊ, ລົງວັນທີ 20 ທັນວາ 2011 ແມ່ນ ມີຜົນ ສັກສິດ ແລະ ນຳໃຊ້ນັບແຕ່ວັນທີ 01 ຕຸລາ 2012 ເປັນຕົ້ນໄປ;
2. ການຄິດໄລ່ກຳໄລລວມແບບບັງຄັບ ນຳວິສາຫະກິດສ່ວນບຸກຄົນ, ນິຕິບຸກຄົນ ແລະ ຜູ້ປະກອບອາຊີບອິດສະລະ ໃຫ້ປະຕິບັດຕາມອັດຕາທີ່ກຳນົດໄວ້ໃນມາດຕາ 21 ຂອງບົດແນະນຳຈັດຕັ້ງປະຕິບັດກົດໝາຍວ່າດ້ວຍສ່ວຍສາອາກອນເລກທີ 2137/ກງ, ລົງວັນທີ 28 ກັນຍາ 2005 ໄປກ່ອນຈົນກວ່າ ລັດຖະບັນຍັດຂອງປະທານປະເທດຖືກຮັບຮອງ ແລະ ປະກາດໃຊ້;
3. ອາກອນຊົມໃຊ້ພາຫະນະລົດໃຫຍ່ຕາມທີ່ກຳນົດໄວ້ໃນມາດຕາ 20 ຂໍ້ 11.2 ຂອງກົດໝາຍວ່າດ້ວຍສ່ວຍສາອາກອນສະບັບເລກທີ 05/ສພຊ,ລົງວັນທີ 20 ທັນວາ 2011 ແມ່ນໃຫ້ປະຕິບັດຕາມກົນໄກເກົ່າຄື: ໃຫ້ຄິດໄລ່ເກັບຢູ່ດ່ານພາສີຂາເຂົ້າໃນເວລາແຈ້ງເສຍພາສີຂາເຂົ້າ, ສ່ວນອັດຕາອາກອນຊົມໃຊ້ແມ່ນໃຫ້ຄິດໄລ່ຕາມອັດ

ຕາທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍສ່ວຍສາອາກອນ ສະບັບເລກທີ 04/ສພຊ,ລົງວັນທີ 19 ພຶດສະພາ 2005 ໄປກ່ອນ, ຈົນກວ່າ ລັດຖະບັນຍັດຂອງປະທານປະເທດຖືກຮັບຮອງ ແລະ ປະກາດໃຊ້;

4. ອາກອນສິ່ງແວດລ້ອມ ຕາມທີ່ກຳນົດໄວ້ໃນມາດຕາ 57 ແລະ 58 ຂອງກົດໝາຍວ່າດ້ວຍສ່ວຍສາອາກອນສະບັບເລກທີ 05/ສພຊ, ລົງວັນທີ 20 ທັນວາ 2011 ແມ່ນຍັງບໍ່ທັນສາມາດປະຕິບັດໄດ້ ຈົນກວ່າ ລັດຖະບັນຍັດຂອງປະທານປະເທດຖືກຮັບຮອງ ແລະ ປະກາດໃຊ້;

5. ການປະຕິບັດອັດຕາອາກອນກຳໄລ

   ການຄິດໄລ່ອາກອນກຳໄລໃນອັດຕາ 24% ແລະ 26% ສຳລັບຜູ້ຜະລິດ, ນຳເຂົ້າ ແລະ ຈຳໜ່າຍຜະລິດຕະພັນຢາສູບ ແມ່ນໃຫ້ຄິດໄລ່ເລີ່ມແຕ່ ວັນທີ 01 ມັງກອນ 2013 (ຖືເອົາປີການບັນຊີ ປີປະຕິທິນ)ເປັນຕົ້ນໄປ.

   - ສຳລັບປີການບັນຊີ 2012 ແມ່ນໃຫ້ຄິດໄລ່ ແລະ ເກັບອາກອນກຳໄລໃນອັດຕາ 28% ແລະ 30% ສຳລັບຜູ້ຜະລິດ, ນຳເຂົ້າ ແລະ ຈຳໜ່າຍຜະລິດຕະພັນຢາສູບ ຕາມທີ່ກຳນົດໄວ້ໃນລັດຖະບັນຍັດຂອງປະທານປະເທດສະບັບ ເລກທີ 001/ປປທ, ລົງວັນທີ 01 ມີນາ 2010.

6. ຍົກເລີກການຄິດໄລ່ເກັບອາກອນຕ່ຳສຸດ ນຳວິສາຫະກິດ/ບໍລິສັດ ທີ່ແຈ້ງຂາດທຶນ ຫຼື ມີກຳໄລບໍ່ເຖິງລະດັບ ແມ່ນໃຫ້ເລີ່ມຈັດຕັ້ງປະຕິບັດນັບປີການບັນຊີ 2013 ເປັນຕົ້ນໄປ;

7. ສ່ວນເນື້ອໃນອື່ນນອກຈາກລະບຸໄວ້ຂ້າງເທິງນີ້ ແມ່ນມີຜົນບັງຄັບໃຊ້ໄດ້ແຕ່ວັນທີ 01 ຕຸລາ 2012 ເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ຢ່າງເຂັ້ມງວດ.

ລັດຖະມົນຕີວ່າການກະຊວງການເງິນ.

ພູເພັດ ຄຳພູນວົງ